ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ


**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ

MODERN QUICK RELIABLE


ສຳນັກງານໃຫຍ່

ເລກທີ: 4585 /ທຄຕລ ..2023.........

ນະຄອນຫຼວງວຽງຈັນ, ວັນທີ: 24 NOV 2023

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ຕົວແທນຈຳໜ່າຍພາຫະນະ ພາຍໃນ ນະຄອນຫຼວງວຽງຈັນ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ພາຫະນະ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ພາຫະນະ ເພື່ອນຳໃຊ້ເຂົ້າໃນວຽກງານຂອງ ທຄຕລ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງລຸ່ມນີ້:

| ລ/ດ | ລາຍລະອຽດ | ຈຳນວນ |
|---|---|---|
| 1 | **ລົດຕູ້**<br>ລົດຕູ້, ຍີ່ຫໍ້ Toyota, 14 ບ່ອນນັ່ງຂຶ້ນໄປ, ຂັບເຄື່ອນ 2 ລໍ້, ຫຼັງຄາສູງ, ພວງມະໄລຊ້າຍເດີມ, ເຄື່ອງຈັກ 4 ສູບ, ຄວາມແຮງ 2.500-2800 ຊີຊີ, ເກຍກະປຸກ | 09 ຄັນ |
| 2 | **ລົດກະບະ**<br>ລົດກະບະ ຍີ່ຫໍ້ Toyota, 4 ປະຕູ, ລຸ້ນສູງ, ເກຍກະປຸກ, ຂັບເຄື່ອນ 4 ລໍ້, ພວງມະໄລຊ້າຍເດີມ, ຄວາມແຮງ 2.000 ຊີຊີ ຂຶ້ນໄປ. | 04 ຄັນ |
| 3 | **ລົດເຄື່ອນຍ້າຍວັດຖຸ ຮູບຊົງລົດກະບະ** Toyota<br>TOYOTA Hilux Revo 4WD– CHASSIS SUPPLIED<br>BR6 LEVEL ARMORED CASH IN TRANSIT APPLICATION<br>- Run Flat Devices on all wheels<br>- ECM, Fuse Box & Battery Protection<br>-Fuel Tank Protection<br>-Heavy Duty Suspension System<br>-Reinforced Door Hinges<br>-6 Camera Surveillance System + 2TB Storage + HD Monitor<br>-Heavy Duty All Terrain Tires<br>-Gun Port x 2<br>-ເສີມກຸນແຈຕູ້ເຊັບດ້ານຫຼັງ ໃຫ້ເປັນລະຫັດແບບໝູນ<br>-ປັບແວ່ນຂ້າງໃຫ້ສາມາດເລື່ອນລົງໄດ້ (ເລັກນ້ອຍ) | 02 ຄັນ |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍພາຫະນະ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **ເອກະສານ ຊອງທີ່1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍພາຫະນະ, ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2022 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).


ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9 ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

2. ກຳນົດຍື່ນຊອງລາຍລະອຽດສະເປັກລິດ, ການຮັບປະກັນສິນຄ້າ, ໄລຍະເວລາໃນການຈັດສົ່ງ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້ ແລະ ຍື່ນກ່ອນ **ວັນທີ 05/12//2023 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la

❖ **<u>ເອກະສານ ຊອງທີ່2:</u> (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນມູນຄ່າເພີ່ມ ພ້ອມທັງລະບຸເປັນສະກຸນເງິນກີບ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານທຸລະກິດພາຍໃນ ສປປ ລາວ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 12/01/2024)** ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນຖານ **ວັນທີ 12/12/2023 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານສານຊອງທີ 1 ມາຍື່ນຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 5 ອາຄານ C.

❖ **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ. ການຄັດເລືອກຜູ້ສະໜອງ ແມ່ນຈະໄດ້ຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.

➔ **ການຊຳລະຈະຈ່າຍເປັນງວດດຽວ 100 %** ຂອງມູນຄ່າ ພາຍໃນ 20 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ແລະ ໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

ຕິດຕໍ່: 021 213 200-414

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ປະເທດ....... | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: